ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ລັດຖະບານ ແຫ່ງ ສປປ ລາວ

ເລກທີ 213 /ລບ

ນະຄອນຫຼວງວຽງຈັນ, ວັນທີ 18.07.2011

# ດຳລັດ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດ ການອຳນວຍຄວາມສະດວກທາງດ້ານການຄ້າ ຂອງ ສປປ ລາວ ໃນໄລຍະແຕ່ ປີ 2011 ຫາ 2015

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນ ເມສາ 2011 ຄັ້ງວັນທີ 25-26 ເມສາ 2011;
- ອີງຕາມໜັງສືສະເໜີຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1278/ອຄ, ລົງວັນທີ 7 ກໍລະກົດ 2011.

**ລັດຖະບານ ແຫ່ງ ສປປ ລາວ ອອກດຳລັດ :**

ມາດຕາ 1: ຮັບຮອງ ແລະ ປະກາດໃຊ້ແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ຂອງ ສປປ ລາວ ໄລຍະແຕ່ ປີ 2011 ຫາ 2015.

ມາດຕາ 2: ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການໃນການປະສານສົມທົບກັບບັນດາຂະແໜງການທີ່ປົກອ້ອມວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດດັ່ງກ່າວ ໃຫ້ມີປະສິດທິຜົນສູງ ໂດຍກຳນົດເວລາປະຕິບັດແຕ່ລະໜ້າວຽກຢ່າງລະອຽດຈະແຈ້ງ ແລະ ລາຍງານຜົນການຈັດຕັ້ງປະຕິບັດໃຫ້ລັດຖະບານຊາບ ເປັນປົກກະຕິ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫລວງວຽງຈັນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ແຜນຍຸດທະສາດດັ່ງກ່າວ ແລະ ດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

ມາດຕາ 4: ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ